# ແຊ່ເຢັນບັດໄວ້

**ແຊ່ເຢັນບັດໄວ້** ແມ່ນແບບວິທີໃນລະດັບບັດອັນນຶ່ງຢູ່ໃນ ebtEDGE ທີ່ອະນຸຍາດໃຫ້ຜູ້ຖືບັດເພື່ອຈະເຮັດໃຫ້ໃຊ້ການບໍ່ໄດ້ໃນບັດຂອງເຂົາເຈົ້າຈາກການຖືກໃຊ້ສຳລັບການຊື້ເອົາຫລືການປ່ຽນເລກ PIN. ລູກຄ້າສາມາດແຊ່ເຢັນໄວ້ຫລືແກ້ການແຊ່ເຢັນໄວ້ບັດຂອງເຂົາເຈົ້າໂດຍການລອກອິນເຂົ້າໃນໂມໄບແອບ໌ FIS ebtEDGE ຫລືຜ່ານປະຕູເຂົ້າຂອງຜູ້ຖືບັດ ebtEDGE.

ເມື່ອແບບວິທີ "ແຊ່ເຢັນໄວ້" { ເປີດຂຶ້ນຢູ່, ສິ່ງຕໍ່ລົງໄປນີ້ຈະບໍ່ເກີດຂຶ້ນ:

- ການຊື້ເອົາອາຫານຫລືເງິນສົດ
- ການຖອນເອົາເງິນສົດ
- ການເລືອກເອົາຫລືການປ່ຽນເລກ PIN
- ການຖາມເບິ່ງບັນຊີຍັງເຫລືອຢູ່

### ຈະເຮັດໃຫ້ບັດແຊ່ເຢັນໄວ້ໄດ້ແນວໃດ

ລອກອິນເຂົ້າໃນ FIS ebtEDGE ໃນຖານະເປັນຜູ້ຖືບັດໄດ້ທີ່ **www.ebtedge.com** ຫລືລອກອິນໃນໂມໄບແອບ໌ໄດ້ທີ່ **www.fisglobal.com/ebtedgemobile.**




1. ເລືອກເອົາບັນຊີເພື່ອຈະເບິ່ງ **ສະລູບຄວາມຂອງບັນຊີ.**
2. ເລືອກເອົາ **ແຊ່ເຢັນບັດໄວ້** ຈາກການບໍຣິການບັນຊີ.
3. ເລືອກເອົາ **OK** ຢູ່ຂ່າວຢືນຢັນການແຊ່ເຢັນບັດໄວ້.




# ການຝາກຖອນ

1. ລອກອິນເຂົ້າໃນ FIS ebtEDGE ໃນຖານະເປັນຜູ້ຖືບັດ ຫລືລອກອິນໃນໂມໄບແອບ໌.




2. ເລືອກເອົາບັນຊີເພື່ອຈະເບິ່ງ**ສະລູບຄວາມຂອງບັນຊີ.**
3. ເລືອກເອົາ **ປ້ອງກັນບັນຊີຂອງຂ້ອຍ.**




4. ເປີດໃຊ້ **ການກີດກັ້ນການຝາກຖອນຢູ່ນອກຣັດ.**
5. ເປີດໃຊ້ **ການກີດກັ້ນການຝາກຖອນທາງອິນເຕີແນດ໌.**




ໃຫ້ມີສະຕິຮັບຮູ້ ໃຫ້ຕຽມພ້ອມ




# EBT

## ປ້ອງກັນສະວັດດີການຂອງທ່ານຈາກການດູດເອົາຣະຫັດແລະການຮຽນແບບ

Washington State Department of Social & Health Services

*Transforming lives*

DSHS 22-1911 LA (1/23) Laotian

## ການດູດເອົາລະຫັດຈາກບັດແມ່ນຫຍັງ?

ການດູດເອົາລະຫັດເກີດຂື້ນເມື່ອອຸປະກອນໄດ້ຖືກຕິດຕັ້ງຢ່າງຜິດກົດໝາຍໃສ່ ATMs, ເຄື່ອງເກັບເງິນຢູ່ຈຸດຊື້ຂາຍຫລືປ້ຳນ້ຳມັນທີ່ເກັບເອົາຂໍ້ມູນຫລືບັນທຶກເອົາເລກ PINs ຂອງຜູ້ຖືບັດ.ນັກອາດສະຍາກັມໃຊ້ຂໍ້ມູນອັນນີ້ ເພື່ອຈະເຮັດຂື້ນມາບັດເດບິດຫລືເຄຣດິດປອມ,ແລ້ວຂະໂມຍເອົາຈາກບັນຊີຂອງຜູ້ເຄາະຮ້າຍຂອງເຂົາເຈົ້າ.

ການຂະໂມຍເອົາການດູດເອົາລະຫັດຈາກບັດສາມາດສະທ້ອນເຖິງທຸກໆຄົນຜູ້ທີ່ໃຊ້ບັດເຄດິດ,ເດບິດຫລືບັດ EBT ຂອງເຂົາເຈົ້າຢູ່ຕາມ ATMs, ປ້ຳນ້ຳມັນ,ຮ້ານອາຫານຫລືຮ້ານຄ້າທົ່ວໄປ.




## ລາຍງານແລະເຮັດບັດໃຫມ່ແທນ

ເຮັດບັດ EBT ຂອງທ່ານແທນທັນທີໂລດ, ປ່ຽນເລກ PIN ຂອງທ່ານແລະຍື່ນໃບລາຍງານຕຳຣວດຖ້າຫາກວ່າທ່ານຄິດວ່າທ່ານໄດ້ເປັນຜູ້ເຄາະຮ້າຍຂອງການ

*ຕິດຕໍ່ຫາ **FIS ebtEDGE** ຢູ່ໃນໂມໂບແອບ໌ຂອງເຂົາເຈົ້າ,ຫລືໂທຫາໂດຍທັນທີໂລດ*
***1-888-328-9271*.**

## ການດູດເອົາລະຫັດຈາກ ATM ແລະເຄື່ອງເກັບເງິນບ່ອນຈຸດຊື້ຂາຍ

ອຸບປະກອນດູດເອົາລະຫັດຈາກຈັກ ATM ໂດຍທົ່ວໄປແລ້ວຈະໃສ່ພໍດີກັບເຄື່ອງອ່ານບັດຕົວຈິງ.

ອຸບປະກອນດູດເອົາຂອງ ATM ບາງອັນໄດ້ຖືກສອດເຂົ້າໃສ່ໃນເຄື່ອງອ່ານບັດ, ຖືກວາງໃສ່ໃນຫນ້າຈໍຫລືຕັ້ງຢູ່ຕາມສາຍເຄເບີນທີ່ເຫັນອອກມາ.

ກ້ອງຖ່າຍຮູບຂະນາດຮູເຂັມຖືກຕິດຕັ້ງຢູ່ ATMs ຈະບັນທຶກເອົາລູກຄ້າກຳລັງຕີເລກ PINs ຂອງເຂົາເຈົ້າ.ການວາງກ້ອງຖ່າຍຮູບຂະນາດຮູເຂັມແຕກຕ່າງກັນໄປຫລາຍ.

ຢູ່ໃນບາງກໍຣະນີ,ແຜ່ນປົກແຜງຕີເລກໄດ້ຖືກໃຊ້ແທນທີ່ຂອງກ້ອງຖ່າຍຮູບຂະນາດຮູເຂັມເພື່ອຈະບັນທຶກ PINs. ແຜ່ນປົກແຜງຕີເລກບັນທຶກບາດຕີເລກຂອງລູກຄ້າ.

ອຸບປະກອນດູດເອົາຈະເກັບກຳຂໍ້ມູນເພື່ອຈະດາວໂຫລດຫລືໂອນມັນໂດຍບໍ່ມີສາຍຕໍ່ໃນເວລາຕໍ່ມາ.

## ຈະກວດເບິ່ງອຸບປະກອນດູດເອົາໄດ້ແນວໃດ

ກ່ອນຈະໃຊ້ເຄື່ອງຈັກ ATM ຫລືເຄື່ອງເກັບເງິນບ່ອນຈຸດຊື້,ກວດເບິ່ງບັນຫາການລາຍລຽງຣະຫວ່າງເຄື່ອງຈັກອ່ານແລະແຜ່ນຢູ່ກ້ອງມັນ. ອຸບປະກອນດູດເອົາຈະຖືກວາງຢູ່ສະເມີຢູ່ເທິງເຄື່ອງອ່ານບັດຕົວຈິງ,ຊຶ່ງເຮັດໃຫ້ມັນຊື້ອອກມາໃນແງ່ແປກປະລາດຫລືກວນເອົາລູກສອນຢູ່ແຜ່ນ.

## ຂ້ອຍສາມາດເຮັດຫຍັງໄດ້ແດ່ເພື່ອຈະປ້ອງກັນບັດ EBT ຂອງຂ້ອຍ?

- ປ່ຽນເລກ PIN ຂອງທ່ານເລື້ອຍໆ.
- ກວດເບິ່ງເງິນຍັງເຫລືອຢູ່ແລະການຝາກຖອນຂອງທ່ານຢູ່ສະເມີ.
- ຢ່າສູ່ຕັ້ງເລກ PIN ຂອງທ່ານໃສ່ເລກໃດເລກນຶ່ງທີ່ກະຕວງໄດ້ງ່າຍໆ.
- ຢ່າສູ່ຕອບຕໍ່ໂທຣະສັບມາຫາ,ອີແມລ໌ຫລື ເທັກຊ໌ແມດເຊດຈ໌ທີ່ຖາມເອົາເລກບັດຫລື ເລກ PIN ຂອງທ່ານ

